**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 77 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 / 12 / 22

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ວ່າດ້ວຍ ການຮັບຮອງເອົາບົດລາຍງານ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການກວດກາແຫ່ງລັດ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 มິຖຸນາ 2020 ມາດຕາ 12 ແລະ ມາດຕາ 59;
- ອີງຕາມ ກົດໝາຍວ່າດ້ວຍ ການກວດກາລັດ ສະບັບເລກທີ 41/ສພຊ, ລົງວັນທີ 16 ພະຈິກ 2017;
- ອີງຕາມ ບົດລາຍງານຂອງອົງການກວດກາແຫ່ງລັດ ສະບັບເລກທີ 268/ອກຫລ, ລົງວັນທີ 22 ທັນວາ 2022.

ຜ່ານການຮັບຟັງການລາຍງານ ຂອງອົງການກວດກາແຫ່ງລັດ, ການຕິດຕາມກວດກາ ແລະ ການຄົ້ນຄວ້າປະກອບຄຳຄິດຄຳເຫັນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງສະມາຊິກສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022**

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດກາແຫ່ງລັດ ທີ່ໄດ້ມີຄວາມພະຍາຍາມປະຕິບັດແຜນການເຄື່ອນໄຫວ ປະຈຳປີ 2022 ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ສາມາດຍາດໄດ້ຜົນສຳເລັດ ຫຼາຍດ້ານ ດັ່ງນີ້:

1.1 ຜົນການກວດກາຕາມມະຕິສະພາແຫ່ງຊາດ ສະບັບເລກທີ 24/ສພຊ, ລົງວັນທີ 16 ພະຈິກ 2021 ດັ່ງນີ້:

ການກວດກາໂຄງການລົງທຶນຂອງລັດທີ່ມີມູນຄ່າ 10 ຕື້ກີບຂຶ້ນໄປ ແລະ ໂຄງການທີ່ມີມູນຄ່າຫຼຸດ 10 ຕື້ກີບລົງມາ ຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 130/ຫສນຍ, ລົງວັນທີ 20 ມັງກອນ 2019 ໄດ້ກວດກາສຳເລັດ ຈຳນວນ 896 ໂຄງການ ມູນຄ່າ 19.085,27 ຕື້ກີບ; ພົບເຫັນ:

- ມີ 51 ໂຄງການ ມູນຄ່າຕາມສັນຍາທີ່ສູງກວ່າ 20% ຂຶ້ນໄປ ເມື່ອສົມທຽບກັບລາຄາ ຫົວໜ່ວຍຂອງກະຊວງກ່ຽວຂ້ອງກຳນົດ ຜິດດ່ຽງ 432,20 ຕື້ກີບ;
- ມູນຄ່າທີ່ບໍ່ຖືກລະບຽບການ, ໜ້າວຽກບໍ່ໄດ້ຈັດຕັ້ງປະຕິບັດ, ແຕ່ໄດ້ສະຫຼຸບໄປຖອນເອົາເງິນ ແລະ ພັນທະອາກອນທີ່ຍັງຄ້າງມອບໃຫ້ລັດ ຈຳນວນ 2.012,55 ຕື້ກີບ ແລະ 750.801,94 ໂດລາສະຫະລັດ ທີ່ຈະຕ້ອງເກັບກູ້ຄືນໃຫ້ລັດ;

- ມີ 37 ໂຄງການ ໄດ້ມີການດັດແກ້ແບບ, ມີໜ້າວຽກ ແລະ ບໍລິມາດວຽກເພີ່ມຂຶ້ນເກີນມູນຄ່າທີ່ສະພາແຫ່ງຊາດ ຮັບຮອງ ກາຍເປັນມູນຄ່າໂຄງການນອກແຜນ ຈຳນວນ 310,49 ຕື້ກີບ;
- ເຈົ້າຂອງໂຄງການ (ແຂວງໄຊຍະບູລີ ແລະ ແຂວງເຊກອງ) ໄດ້ກູ້ຢືມເງິນຈາກທະນາຄານມາຊຳລະໃຫ້ຜູ້ຮັບເໝົາກໍ່ສ້າງ ເຮັດໃຫ້ມີດອກເບ້ຍເພີ່ມຂຶ້ນເກີນມູນຄ່າຕາມສັນຍາ ຊຶ່ງລັດຕ້ອງຮັບພາລະ ແລະ ຍັງບໍ່ມີແຫຼ່ງທຶນທີ່ຈະມາຊຳລະທັງຕົ້ນທຶນ ແລະ ດອກເບ້ຍ, ຊຶ່ງໃນນີ້:
  + ແຂວງໄຊຍະບູລີ (ໂຄງການຊົນລະປະທານ ນ້ຳມ້າວ-ນ້ຳແໜັບ) ມູນຄ່າໂຄງການ 41,60 ຕື້ກີບ, ແຕ່ມູນຄ່າກູ້ຢືມທີ່ມີຕົ້ນທຶນ ແລະ ດອກເບ້ຍ ເພື່ອນຳໃຊ້ໃນການຊຳລະໃຫ້ໂຄງການ (ຄິດໄລ່ຮອດ ເດືອນ 10 ປີ 2022) ເທົ່າກັບ 31,408 ຕື້ກີບ;
  + ແຂວງເຊກອງ ມູນຄ່າໂຄງການ 26 ຕື້ກີບ, ແຕ່ມູນຄ່າກູ້ຢືມທີ່ມີຕົ້ນທຶນ ແລະ ດອກເບ້ຍ ເທົ່າກັບ 34,50 ຕື້ກີບ;
- ການສຳຫຼວດ-ອອກແບບ ໂຄງການຈຳນວນໜຶ່ງ ຍັງບໍ່ລະອຽດຊັດເຈນເຮັດໃຫ້ມີການດັດແກ້ແບບ, ບໍລິມາດວຽກ ແລະ ມູນຄ່າໂຄງການເພີ່ມຂຶ້ນ ເກີນມູນຄ່າທີ່ສະພາແຫ່ງຊາດຮັບຮອງ; ການກໍ່ສ້າງບໍ່ມີຄຸນນະພາບ, ບໍ່ຖືກມາດຕະຖານເຕັກນິກ ເຮັດໃຫ້ໂຄງການຈຳນວນໜຶ່ງຕ້ອງໄດ້ໂຈະການກໍ່ສ້າງ;
- ການອອກນິຕິກຳຄິດໄລ່ ລາຄາຫົວໜ່ວຍການກໍ່ສ້າງ, ການຄິດໄລ່ຄ່າສຳຫຼວດ-ອອກແບບ, ຄ່າຄຸ້ມຄອງໂຄງການ ແລະ ຄ່າຈ້າງທີ່ປຶກສາໂຄງການ ບໍ່ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ແລະ ດຳລັດແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 431/ລບ ລົງວັນທີ 28 ພະຈິກ 2014.

1.2 ການກວດກາ ຕາມມະຕິສະພາແຫ່ງຊາດ ເລກທີ 14/ສພຊ, ລົງວັນທີ 4 ພະຈິກ 2020 ທີ່ຍັງຄ້າງ.

1.2.1 ການກວດກາ ການໃຫ້ເຊົ່າ-ສຳປະທານດິນລັດ 30 ໂຄງການ, ເນື້ອທີ່ 318,89 ເຮັກຕາ, ກວດເຫັນດັ່ງນີ້:

- ບໍ່ໄດ້ ເຮັດສັນຍາເຊົ່າສຳປະທານ, ຄິດໄລ່ຄ່າເຊົ່າສຳປະທານ ແລະ ຄິດໄລ່ຄ່າຊົບພະຍາກອນທຳມະຊາດ ບໍ່ໄດ້ປະຕິບັດຕາມທີ່ກຳນົດໄວ້ໃນລັດຖະບັນຍັດວ່າດ້ວຍ ອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ ແລະ ລັດຖະບັນຍັດວ່າດ້ວຍ ອັດຕາຄ່າຊົບພະຍາກອນທຳມະຊາດ;
- ອົງການປົກຄອງຂັ້ນເມືອງ ອະນຸຍາດໃຫ້ເຊົ່າ-ສຳປະທານດິນລັດ ເກີນສິດ ທີ່ໄດ້ກຳນົດໄວ້ໃນ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 135/ນຍ ແລະ ການຕິດຕາມກວດກາ ການປະຕິບັດສັນຍາສຳປະທານ ຂອງພະແນກການກ່ຽວຂ້ອງເຮັດບໍ່ທັນໄດ້ດີ;
- ຜູ້ເຊົ່າສຳປະທານບໍ່ພັດທະນາຕາມສັນຍາ, ມີລັກສະນະຈັບຈອງທີ່ດິນໄວ້ເພື່ອລໍຖ້າຂາຍ ຫຼື ໃຫ້ຜູ້ອື່ນເຊົ່າສຳປະທານຕໍ່;
- ຜູ້ປະກອບການຍັງຄ້າງມອບຄ່າເຊົ່າສຳປະທານ ຈຳນວນ 0,03 ຕື້ກີບ ແລະ 41.716 ໂດລາສະຫະລັດ.

1.2.2 ການກວດກາໂຄງການລົງທຶນຂອງລັດ ບໍ່ຜ່ານ ການປະເມີນ, ການປະມູນ, ຈ່າຍເງິນບໍ່ນອນໃນແຜນງົບປະມານ, ບໍ່ໄດ້ຄ້ຳປະກັນສັນຍາ–ໂຄງການ ແລະ ໂຄງການນອກແຜນ ທັງໝົດ 160 ໂຄງການ ມູນຄ່າ 4.237,37 ຕື້ກີບ, ໄດ້ກວດກາ 85 ໂຄງການ ມູນຄ່າ 2.451,98 ຕື້ກີບ, ພົບເຫັນ:

- ໂຄງການບໍ່ໄດ້ຜ່ານການປະເມີນ, ວາງເງິນຄ້ຳປະກັນສັນຍາ ແລະ ບໍ່ຜ່ານການຈັດຊື້-ຈັດຈ້າງ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແລະ ກົດໝາຍວ່າດ້ວຍການລົງທຶນຂອງລັດ;
- ມີໂຄງການນອກແຜນ 7 ໂຄງການ ມູນຄ່າ 18,30 ຕື້ກີບ, ແກ້ໄຂແລ້ວ 6 ໂຄງການ ແລະ ຍັງ 1 ໂຄງການ ມູນຄ່າ 7,52 ຕື້ກີບ.

1.3 ການກວດກາ 3 ເປົ້າໝາຍ ຕາມມະຕິເລກທີ 24/ສພຊ ລົງວັນ 16 ພະຈິກ 2021 ໄດ້ດຳເນີນກວດກາ ຈຳນວນ 1 ເປົ້າໝາຍ ຄື: ການນຳໃຊ້ບ້ວງເງິນຊົດເຊີຍຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ແລະ ຍັງບໍ່ທັນໄດ້ດຳເນີນການກວດກາ ຈຳນວນ 2 ເປົ້າໝາຍຄື: (1) ການຍົກເວັ້ນພາສີ-ອາກອນນ້ຳມັນເຊື້ອໄຟ; (2) ການປະຕິຮູບທະນາຄານທຸລະກິດລັດ ແລະ ວິສາຫະກິດລັດ;

1.4 ການຕິດຕາມ, ຊຸກຍູ້ ການແກ້ໄຂຜົນການກວດກາ ແຕ່ປີ 2013 ເຖິງປະຈຸບັນ

- ເກັບກູ້ເງິນຂາຍໄມ້ບໍ່ຜ່ານການປະມູນ ແລະ ຂາຍຫຼຸດລາຄາກາງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ທີ່ຍັງຄ້າງຊຳລະຕາມສັນຍາ ຊື້-ຂາຍ ມູນຄ່າ 3,94 ຕື້ກີບ ແລະ 208.378 ໂດລາສະຫະລັດ, ຊຳລະແລ້ວ 0,32 ຕື້ກີບ ແລະ 16.000 ໂດລາສະຫະລັດ;
- ເກັບກູ້ຄືນໜີ້ຕ້ອງຮັບ ຂອງ 9 ກະຊວງ ມູນຄ່າທັງໝົດ 965,68 ຕື້ກີບ, 16.073 ໂດລາສະຫະລັດ ແລະ 11.450 ບາດ; ເກັບກູ້ເງິນຄືນໄດ້ 9,87 ຕື້ກີບ, 160 ໂດລາສະຫາລັດ ແລະ 3.860 ບາດ;
- ປະຕິບັດການຫັກລົບມູນຄ່າໜ້າວຽກທີ່ບໍ່ໄດ້ປະຕິບັດ, ມູນຄ່າຄິດໄລ່ບໍ່ຖືກລະບຽບ, ເຊັນສັນຍາຫຼຸດມູນຄ່າ ທີ່ສະພາແຫ່ງຊາດຮັບຮອງ 72 ໂຄງການ ມູນຄ່າ 682,29 ຕື້ກີບ; ໄດ້ຫັກລົບ 1 ໂຄງການ, ມູນຄ່າ 4,92 ຕື້ກີບ; ຍັງຄ້າງ 71 ໂຄງການ ມູນຄ່າ 677,37 ຕື້ກີບ;
- ແກ້ໄຂໂຄງການນອກແຜນທີ່ສະເໜີພິຈາລະນາເຂົ້າແຜນ ຈຳນວນ 94 ໂຄງການ, ມູນຄ່າ 742,46 ຕື້ກີບ ໃນນີ້, ແກ້ໄຂແລ້ວ 37 ໂຄງການ ຍັງຄ້າງ 57 ໂຄງການ ມູນຄ່າ 622,12 ຕື້ກີບ;
- ຕໍ່ລອງໂຄງການທີ່ມີມູນຄ່າສູງກວ່າລາຄາກາງ 20% ຂຶ້ນໄປໄດ້ 1 ໂຄງການ ແລະ ຍັງຄ້າງ 61 ໂຄງການ, ມູນຄ່າຜິດດ່ຽງ 2.170 ຕື້ກີບ;
- ຊຸກຍູ້ອົງການປົກຄອງ ແຂວງ ຜົ້ງສາລີ, ຫຼວງພະບາງ ແລະ ເຊກອງ ສ້າງສັນຍາເຊົ່າ-ສຳປະທານດິນລັດກັບຜູ້ປະກອບການ ຈຳນວນ 60 ໂຄງການ ແລະ ເກັບກູ້ເງິນຈາກການໃຫ້ ເຊົ່າ-ສຳປະທານ ທີ່ບໍ່ຈ່າຍຄ່າສຳປະທານຕາມສັນຍາຢູ່ ແຂວງຜົ້ງສາລີ 8.185,5 ໂດລາສະຫະລັດ, ແຂວງຫຼວງພະບາງ 65.426.000 ກີບ, ແຂວງເຊກອງ ວາງເງິນຄ້ຳປະກັນບໍ່ຄືບ 15.000 ໂດລາສະຫະລັດ ແລະ ແຂວງອັດຕະປື ຍັງຄ້າງຊຳລະ ຄ່າເຊົ່າ-ສຳປະທານ ເລີ່ມແຕ່ປີ 2018-2020 ຍັງບໍ່ທັນມີຄວາມຄືບໜ້າ;
- ການໄລ່ລຽງຄ່າຊັບພະຍາກອນທຳມະຊາດ ຈຳນວນ 9 ໂຄງການ ຍັງປະຕິບັດບໍ່ໄດ້ຍ້ອນເປັນໂຄງການນອກແຜນ ແລະ ຍັງບໍ່ໄດ້ຊຳລະມູນຄ່າໂຄງການ;
- ຄ່າຈົດທະບຽນຊັບສິນແມ່ນຍັງຄ້າງມອບ ຈຳນວນ 9 ໂຄງການ;
- ຊຸກຍູ້ທວງເງິນຈາກການຫັນສິດນຳໃຊ້ທີ່ດິນຕະຫຼາດທາດຫຼວງ ມູນຄ່າ 32,61 ຕື້ກີບ, ຊຳລະແລ້ວ 10 ຕື້ກີບ ຍັງຄ້າງ 22,61 ຕື້ກີບ;
- ສືບຕໍ່ເກັບກູ້ເງິນຄືນເຂົ້າງົບປະມານແຫ່ງລັດ ມູນຄ່າທີ່ຊຳລະເກີນໜ້າວຽກທີ່ປະຕິບັດໄດ້ຕົວຈິງ 2 ໂຄງການ (ແຂວງຜົ້ງສາລີ ແລະ ແຂວງອຸດົມໄຊ) ມູນຄ່າ 0,76 ຕື້ກີບ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວອົງການ ປະຈຳປີ 2023**

ກອງປະຊຸມ ຮັບຮອງ 6 ຄາດໝາຍສູ້ຊົນ ຕາມການສະເໜີຂອງອົງການກວດກາແຫ່ງລັດ ດັ່ງນີ້:

1. ສືບຕໍ່ກວດກາເປົ້າໝາຍທີ່ຄົງຄ້າງຕາມ ມະຕິສະພາແຫ່ງຊາດ ແຕ່ປີ 2013 ເຖິງປະຈຸບັນ ເປັນຕົ້ນ: 5 ກົມຂອງກະຊວງການເງິນ, ເກັບກູ້ເງິນຄືນ ຈາກການຂາຍໄມ້, ໜີ້ຕ້ອງຮັບຂອງ 8 ກະຊວງ, ເງິນຈາກການຫັນສິດນຳໃຊ້ທີ່ດິນຕະຫຼາດທາດຫຼວງ, ການໃຫ້ເຊົ່າ-ສຳປະທານດິນລັດ ແລະ ບັນຫາອື່ນທີ່ຍັງຄ້າງ;
2. ສືບຕໍ່ກວດກາໂຄງການ ທີ່ບໍ່ໄດ້ຜ່ານການປະເມີນ, ປະມູນຖືກຕ້ອງຕາມຂັ້ນຕອນກົດໝາຍ ທີ່ຍັງຄ້າງຈຳນວນ 75 ໂຄງການ ມູນຄ່າ 1.785 ຕື້ກີບ (ຕາມບັນຊີຄັດຕິດໃນບົດລາຍງານ);
3. ສືບຕໍ່ກວດກາໂຄງການລົງທຶນຂອງລັດ ຕາມແຈ້ງການ ສະບັບເລກທີ 130/ຫສນຍ ທີ່ຍັງຄ້າງ ຈຳນວນ 2.370 ໂຄງການ ມູນຄ່າ 47.711,60 ຕື້ກີບ, ໃນນີ້ໂຄງການທີ່ມີມູນຄ່າ 10 ຕື້ກີບຂຶ້ນໄປ ຈຳນວນ 136 ໂຄງການ ມູນຄ່າ 41.613,21 ຕື້ກີບ ແລະ ໂຄງການ ທີ່ມີ ມູນຄ່າ 10 ຕື້ກີບລົງມາ ຈຳນວນ 2.234 ໂຄງການ ມູນຄ່າ 6.098,40 ຕື້ກີບ (ຕາມບັນຊີຄັດຕິດໃນບົດລາຍງານ);
4. ກວດກາລົງເລິກຄວາມຮັບຜິດຊອບຂອງພະນັກງານ ກ່ຽວກັບການຢັ້ງຢືນບໍລິມາດວຽກ ບໍ່ຖືກຕ້ອງກັບຕົວຈິງ ຢູ່ ແຂວງ ຫົວພັນ, ໄຊຍະບູລີ, ບໍລິຄຳໄຊ, ເຊກອງ, ນະຄອນຫຼວງ ແລະ ກະຊວງກະສິກຳ ແລະ ປ່າໄມ້ ໃນການຊຳລະໂຄງການດ້ວຍງົບປະມານຂອງລັດ ທີ່ຊ້ຳຊ້ອນກັນ, ການກູ້ຢືມເງິນທະນາຄານ ມາຊຳລະໃຫ້ຜູ້ຮັບເໝົາ ພ້ອມທັງສະເໜີມາດຕະການທາງວິໄນ ຕໍ່ຜູ້ລະເມີດຕາມແຕ່ລະກໍລະນີ;

5. ກວດກາຕາມຜົນການກວດສອບ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານ ປະຈໍາປີ 2021 ແລະ ກວດກາລົງເລິກ ບັນດາເປົ້າໝາຍທີ່ອົງການກວດສອບແຫ່ງລັດ ສົ່ງໃຫ້ ແລະ ກວດກາຕາມການມອບໝາຍຂອງຂັ້ນເທິງ;
6. ກໍານົດເປົ້າໝາຍກວດກາ ທີ່ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ເປັນຕົ້ນ ການເກັບກູ້ໜີ້ສິນທີ່ຄ້າງມອບ, ການສະໜອງນໍ້າມັນເຊື້ອໄຟ, ການເກັບລາຍຮັບຈາກໂຄງການເຮັດທິດລອງຂຸດຄົ້ນ ແລະ ສົ່ງອອກແຮ່ທາດ ແລະ ການຄຸ້ມຄອງເງິນຕາຕ່າງປະເທດຈາກການສົ່ງອອກ; ໃຫ້ສືບຕໍ່ກວດກາ ການຊົດເຊີຍໃຫ້ແກ່ປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟ, ໂຄງການເຂື່ອນໄຟຟ້າເຊປຽນ-ເຊນໍ້ານ້ອຍ ຢູ່ແຂວງອັດຕະປື ແລະ ບັນຫາອື່ນໆ.

## ມາດຕາ 3 ຮັບຮອງເອົາມາດຕະການແກ້ໄຂຜົນການກວດກາ ແລະ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວ ປະຈໍາປີ 2023

ກອງປະຊຸມ ຮັບຮອງເອົາ 10 ມາດຕະການ ແກ້ໄຂຜົນການກວດກາ, 5 ມາດຕະການ ໃນການປະຕິບັດແຜນການເຄື່ອນໄຫວ ປະຈໍາປີ 2023 ຕາມການສະເໜີຂອງອົງການກວດກາແຫ່ງລັດ. ພ້ອມກັນນັ້ນ, ກອງປະຊຸມ ສະເໜີໃຫ້ເອົາໃຈໃສ່ ບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ມອບໃຫ້ ລັດຖະບານ:
   - ໃຫ້ນາຍົກລັດຖະມົນຕີຊີ້ນໍາ ການແກ້ໄຂຜົນການກວດກາ ຢ່າງຈິງຈັງເປັນຮູບປະທໍາ ແລະ ຖືເອົາການແກ້ໄຂຜົນການກວດກາ ເປັນມາດຕະຖານໃນການປະເມີນບຸກຄະລາກອນ ທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ, ພ້ອມທັງລາຍງານຄະນະປະຈໍາສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເປັນແຕ່ລະໄລຍະ;
   - ເພີ່ມງົບປະມານ 6 ຕື້ກີບ ໃນປີ 2023 ໃຫ້ອົງການກວດກາແຫ່ງລັດ ນໍາໃຊ້ເຂົ້າໃນວຽກງານທີ່ຈໍາເປັນ ເພື່ອຍົກສູງຄຸນນະພາບ, ເຕັກນິກ ແລະ ມາດຕະຖານຕ່າງໆ ຂອງວຽກງານກວດກາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
   - ຊີ້ນໍາຂະແໜງການສູນກາງ ແລະ ທ້ອງຖິ່ນ ໃຫ້ເອົາໃຈໃສ່ຮ່ວມມື, ປະສານສົມທົບ, ອໍານວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນທີ່ຈໍາເປັນ ແລະ ເຂົ້າຮ່ວມວຽກງານກວດກາແຫ່ງລັດຢ່າງຕັ້ງໜ້າ.
2. ມອບໃຫ້ ອົງການກວດກາແຫ່ງລັດ:
   - ເອົາໃຈໃສ່ປະຕິບັດ ແລະ ບັງຄັບໃຊ້ກົດໝາຍວ່າດ້ວຍ ການກວດກາລັດ ມາດຕາ 24 ແລະ 25 ໃຫ້ເຂັ້ມງວດ ແລະ ເປັນຮູບປະທໍາ;
   - ປະສານສົມທົບກັບເປົ້າໝາຍກວດກາ, ອົງການຄຸ້ມຄອງເປົ້າໝາຍກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການແກ້ໄຂຜົນການກວດກາ ໃຫ້ມີຄວາມເປັນເອກະພາບທາງດ້ານຫຼັກການ ແລະ ວິທີການ ເພື່ອຮັບປະກັນຄວາມສະເໝີພາບ ແລະ ຍຸຕິທໍາ ໃຫ້ທຸກເປົ້າໝາຍທີ່ຖືກກວດກາ;
   - ລາຍງານຜົນການຈັດຕັ້ງປະຕິບັດມາດຕະການແກ້ໄຂຜົນການກວດກາ ໃຫ້ຄະນະປະຈໍາສະພາແຫ່ງຊາດ ແລະ ສະພາແຫ່ງຊາດ ປະຈໍາ 6 ເດືອນ ແລະ ປະຈໍາປີ ເພື່ອພິຈາລະນາຮັບຮອງ, ຕິດຕາມກວດກາ ແລະ ຊຸກຍູ້ການແກ້ໄຂຜົນການກວດກາ ໃຫ້ໄປຕາມກົດໝາຍ;
   - ເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ຂອງອົງການກວດກາແຫ່ງລັດ ໃຫ້ມີຄວາມຮູ້ດ້ານວິຊາສະເພາະທີ່ໜັກແໜ້ນ, ແນ່ນອນ ແລະ ເປັນມືອາຊີບ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານກວດກາໃນໄລຍະໃໝ່;
   - ເອົາໃຈໃສ່ຈັດຕັ້ງປະຕິບັດກົນໄກການປະສານງານ ລະຫວ່າງ ອົງການກວດກາແຫ່ງລັດ ກັບ ອົງການກວດສອບແຫ່ງລັດ, ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມກົມກຽວ ແລະ ຄ່ອງຕົວ, ຮັບປະກັນການແກ້ໄຂຜົນການກວດກາ ຢ່າງເດັດຂາດ ແລະ ທັນການ.

3. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ ເປັນໃຈກາງໃນການປະສານງານ ກັບ ລັດຖະບານ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ເພື່ອປຶກສາຫາລື ກ່ຽວກັບການແກ້ໄຂຜົນການກວດກາ ແຕ່ລະກໍລະນີໃຫ້ໄປຕາມກົດໝາຍຢ່າງເຂັ້ມງວດ ແລະ ມີຜົນສັກສິດ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການກວດກາແຫ່ງລັດ ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ລັດຖະບານຊີ້ນຳບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ກຳມາທິການແຜນການ, ການເງິນ ແລະ ການກວດສອບ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**